# Special Economic Zones in the Mekong Region

## Advocacy Note

*(Laotian Language)*



EarthRights International

icj International Commission of Jurists

Land Watch Thai

# ກອບແນວຮ່ວມ ເພື່ອຂໍການສະໜັບສະໜູນ ກ່ຽວກັບເລື່ອງ ເຂດເສດຖະກິດພິເສດ ຢູ່ໃນພາກພື້ນແມ່ນໍ້າຂອງ

## ພາກສະເໜີໂດຍຫຍໍ້

ເຂດເສດຖະກິດພິເສດ (ຂພສ) ເປັນພື້ນທີ່ ທີ່ຖືກຈັດແບ່ງເຂດ ອີງຕາມຕາມພູມີສາດຂອງແຕ່ລະພື້ນທີ່ ໂດຍແມ່ນລັດໄດ້ອໍານວຍຄວາມສະດວກ ໃນການດໍາເນີນກິດຈະກໍາທາງດ້ານອຸດສາຫະກໍາ ໃນພື້ນທີ່ດັ່ງກ່າວ ຜ່ານການສ້າງບັນດານະໂຍບາຍພິເສດ ທາງດ້ານການເງິນ ແລະ ກົດລະບຽບ ພ້ອມທັງແນວທາງສະໜັບສະໜູນທາງດ້ານພື້ນຖານໂຄງລ່າງ[1] ແລະ ສ້າງເງື່ອນໄຂສະເພາະ ທາງດ້ານກົດໝາຍຂຶ້ນມາ ເພື່ອຄຸ້ມຄອງການລົງທຶນ ແລະ ການດໍາເນີນທຸລະກິດໃນພື້ນທີ່ເຂດເສດຖະກິດພິເສດ. ໃນບາງກໍລະນີ ໄດ້ມີການແຍກໜ່ວຍງານ ທາງດ້ານບໍລິຫານ ແລະ ການຄຸ້ມຄອງ ພ້ອມທັງ ກອບແນວທາງ ທາງດ້ານນິຕິກໍາສະເພາະຂຶ້ນມາ ເພື່ອອໍານວຍຄວາມສະດວກໃຫ້ແກ່ ການລົງທຶນ ແລະ ເພື່ອຫຼີກລ່ຽງຄວາມລ່າຊ້າ ຈາກລະບົບທາງລັດຖະການ.

ການສ້າງຕັ້ງ ແລະ ພັດທະນາ ເຂດເສດຖະກິດພິເສດ ເປັນຫົວໃຈສໍາຄັນ ສໍາລັບຍຸດທະສາດຂອງລັດຖະບານໃນບັນດາປະເທດພາກພື້ນອາຊຽນ ໃນການເສີມຂະຫຍາຍທາງດ້ານພື້ນຖານໂຄງລ່າງ ແລະ ການດຶງດູດຄວາມສົນໃຈຂອງນັກລົງທຶນຈາກຕ່າງປະເທດ. ເກືອບທຸກໆປະເທດສະມາຊິກຂອງອາຊຽນ[2] ໂດຍສະເພາະ ກໍາປູເຈຍ, ລາວ, ມຽນມາ, ໄທ ແລະ ຫວຽດນາມ (CLMTV) ໄດ້ເລືອກໃຊ້ ເຂດເສດຖະກິດພິເສດ ເປັນຍຸດທະສາດໃນການດຶງດູດຄວາມສົນໃຈຂອງນັກລົງທຶນ, ການສ້າງອາຊີບ ແລະ ເພີ່ມມູນຄ່າການສົ່ງອອກສິນຄ້າ. ແຕ່ເຖິງຢ່າງໃດກໍ່ຕາມ ມີຫຼັກຖານຢັ້ງຢືນໃຫ້ເຫັນວ່າ ເຂດເສດຖະກິດພິເສດ ບໍ່ໄດ້ນໍາມາເຊິ່ງແຕ່ຜົນປະໂຫຍດທາງດ້ານເສດຖະກິດ ຢູ່ໃນປະເທດເຫຼົ່ານີ້ສະເໝີໄປ.[3]

ເຫັນໄດ້ວ່າ ບັນດາລັດຖະບານ ໄດ້ພະຍາຍາມສ້າງ ກົດລະບຽບ ຫຼື ກົນໄກ ຫຼາຍຢ່າງຂຶ້ນມາ ເພື່ອອໍານວຍຄວາມສະດວກໃຫ້ແກ່ການ ສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກໍາອື່ນໆ ເຊິ່ງເປັນການສະທ້ອນໃຫ້ເຫັນວ່າ ການຄຸ້ມຄອງ, ການເຄົາລົບສິດທິມະນຸດ, ການຈ້າງງານ, ສິ່ງແວດລ້ອມ, ການມີສ່ວນຮ່ວມ ແລະ ການພັດທະນາຊຸມຊົນ ແມ່ນກ່ຽວຂ້ອງໂດຍກົງຕໍ່ກັບ ການສ້າງຕັ້ງ ແລະ ການເຄື່ອນໄຫວກິດຈະການດັ່ງກ່າວ.[4]

ເຖິງຢ່າງໃດກໍ່ດີ ທັງ ປະເທດ ກໍາປູເຈຍ, ລາວ, ມຽນມາ, ໄທ ແລະ ຫວຽດນາມ ຕ່າງກໍໄດ້ລົງຊື່ ໃນຫຼາຍສົນທິສັນຍາວ່າດ້ວຍສິດທິມະນຸດສາກົນ ເຊິ່ງໃນນັ້ນລວມເຖິງ ສົນທິສັນຍາສາກົນວ່າດ້ວຍ ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທໍາ (ICESCR) ເຊິ່ງ ເຫັນວ່າ ການສ້າງຕັ້ງເຂດເສດຖະກິດພິເສດ ໃນປະເທດເຫຼົ່ານີ້ ແມ່ນຍັງຂາດການຮັບປະກັນທາງດ້ານລະບຽບກົດໝາຍ ທີ່ຕ້ອງປົກປ້ອງສິດທິມະນຸດ ແລະ ສິ່ງແວດລ້ອມ. ໃນຄວາມເປັນຈິງ ມີລາຍງານຈາກຫຼາຍພື້ນທີ່ໃຫ້ຮູ້ວ່າ ເນື່ອງຈາກ ການບັງຄັບໃຊ້ ບັນດາກົດໝາຍຕ່າງໆທີ່ກ່ຽວຂ້ອງຍັງບໍ່ເດັດຂາດ ແລະ ບໍ່ຮັດກຸມພຽງພໍ

---

[1] ການປະຊຸມ ສະຫະປະຊາຊາດວ່າດ້ວຍ ການຄ້າ ແລະ ການພັດທະນາ (UNCTAD), 'ບົດລາຍງານການລົງທຶນໃນໂລກ ປີ 2019: ເຂດເສດຖະກິດພິເສດ', ສປຊ, 2019, ໜ້າທີ 128, ເຂົ້າເບິ່ງໄດ້ທີ່: https://unctad.org/en/PublicationsLibrary/wir2019_en.pdf

[2] ເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່: https://asean.org/about-asean/member-states/

[3] ເບິ່ງ ເອກະສານອ້າງອີງ ລໍາດັບທີ 1 ໃນບົດລາຍງານການລົງທຶນໃນໂລກ ປີ 2019 ຂອງ UNCTAD

[4] ຍົກຕົວຢ່າງ ໃນບົດລາຍງານການລົງທຶນໃນໂລກ ປີ 2019 ຂອງ UNCTAD ມີການ ອ້າງອີງເຖິງ ເອກະສານ ໃນ ລໍາດັບທີ 1 ຊື່ວ່າ 'ກອບຍຸດທະສາດ: ການໃຊ້ປະໂຫຍດຈາກ ພື້ນທີ່ ແລະ ເຂດອຸດສາຫະກໍາສໍາລັບຍຸກໃໝ່ ເພື່ອການພັດທະນາຢ່າງມີສ່ວນຮ່ວມ ແລະ ມີຄວາມຍືນຍົງ', 2018, ໂດຍ UNIDO, ເຂົ້າເບິ່ງໄດ້ທີ່: https://hub.unido.org/sites/default/files/publications/UNIDO_Strategic%20Framework_WEB.pdf

ໃນການປົກປ້ອງ ສິດທິມະນຸດ ແລະ ສິ່ງແວດລ້ອມ ຈຶ່ງໄດ້ເຮັດໃຫ້ມີການລະເມີດສິດທິມະນຸດ, ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທໍາ ເກີດຂຶ້ນໃນຫຼາຍພື້ນທີ່ ທີ່ມີການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ່ໃນພາກພື້ນລຸ່ມແມ່ນໍ້າຂອງ.

**<u>ກົດໝາຍ ແລະ ມາດຕະຖານສາກົນ ທີ່ກ່ຽວຂ້ອງ</u>**

ຢູ່ໃນບໍລະບົດຂອງການ ພັດທະນາເຂດເສດຖະກິດພິເສດ ສິດທິທາງດ້ານເສດຖະກິດ, ວັດທະນາທໍາ, ສັງຄົມ ແລະ ການເມືອງ ແມ່ນໄດ້ຮັບຜົນກະທົບ ເມື່ອຄວາມກັງວົນ ທັງຈາກສ່ວນບຸກຄົນ ແລະ ຊຸມຊົນບໍ່ໄດ້ຮັບການພິຈາລະນາ ຢ່າງພຽງພໍ ຈາກຜູ້ທີ່ກໍານົດນະໂຍບາຍ ແລະ ກົດໝາຍທີ່ກ່ຽວຂ້ອງ.

ບັນດາສິດທິເຫຼົ່ານີ້ ລວມເຖິງ ສິດທິການມີຄຸນນະພາບໃນການດໍາລົງຊີວິດທີ່ດີ ທີ່ລະບຸໄວ້ໃນສົນທະສັນຍາ ICESCR ເຊິ່ງກວມເອົາປັດໃຈ ທາງດ້ານອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໄສ ແລະ ການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ. ສິດທິເຫຼົ່ານັ້ນ ແມ່ນສາມາດຖືກທໍາລາຍໄດ້ ໂດຍການຖືກຈໍາກັດສິດໃນການ ເຂົ້າເຖິງວິທີການໃນການຄຸ້ມຄອງແຫຼ່ງອາຫານ ເຊິ່ງລວມເຖິງ ການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ທີ່ມີຄວາມຈໍາເປັນຕໍ່ກັບການດໍາລົງຊີວິດຂອງຊຸມຊົນ. ບັນດາປະເທດລຸ່ມແມ່ນໍ້າຂອງ (CLMTV) ຕ້ອງປະຕິບັດຕາມ ສົນທິສັນຍາສິດທິມະນຸດຕ່າງໆ ທີ່ຕົນໄດ້ເຊັນຮັບຮອງເອົາ ລວມເຖິງ ສົນທິສັນຍາ ICESCR ເພື່ອເປັນການປ້ອງກັນ ແລະ ຫຼີກລ່ຽງ ການບັງຄັບໃຫ້ຍົກຍ້າຍອອກຈາກພື້ນທີ່. ການຍົກຍ້າຍປະຊາຊົນອອກຈາກພື້ນທີ່ໃດໜຶ່ງ ຄວນເປັນທາງເລືອກສຸດທ້າຍ ທີ່ຈະເກີດຂຶ້ນ ແລະ ຕ້ອງມີມາດຕະການປົກປ້ອງທີ່ເໝາະສົມ ແລະ ໄດ້ຮັບການເຄົາລົບ ແລະ ເກີດຂຶ້ນໄດ້ ກໍ່ຕໍ່ເມື່ອມີການປະເມີນທາງເລືອກ ອື່ນໆທີ່ເປັນໄປໄດ້ໝົດແລ້ວ.

ໃນສົນທິສັນຍາ ICESCR ໄດ້ຢືນຢັນເຖິງ ສິດທິຂອງທຸກໆຄົນທີ່ຄວນໄດ້ຮັບການຮັບປະກັນຂັ້ນສູງສຸດ ທາງດ້ານສຸຂະພາບກາຍ ແລະ ຈິດໃຈ ລວມທັງການດູແລ ແລະ ປັບປຸງ ສະພາບແວດລ້ອມ ແລະ ຄວາມປອດໄພຂອງການດໍາເນີນງານກ່ຽວກັບອຸດສາຫະກໍາ ໃນທຸກໆດ້ານ. ນອກຈາກນີ້ ບັນດາລັດພາຄີ ຍັງຕ້ອງ ມີການປະຕິບັດພັນທະພື້ນຖານພາຍໃຕ້ຫຼັກການສິດທິມະນຸດສາກົນ ທີ່ກ່ຽວຂ້ອງກັບສິດທິໃນການມີສະພາບແວດລ້ອມ ທີ່ປອດໄພ, ສະອາດ, ມີສຸຂະພາບທີ່ດີ ແລະ ມີຄວາມຍືນຍົງ; ພ້ອມທັງປະຕິບັດຕາມພັນທະ ໃນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ທີ່ອາດຈະເກີດຂຶ້ນ ຈາກບັນດານະໂຍບາຍ ແລະ ໂຄງການທີ່ຈະພັດທະນາ.

ສິດທິໃນການໄດ້ເຮັດວຽກ ແລະ ຢູ່ໃນສະຖານທີ່ເຮັດວຽກ ກໍໄດ້ລະບຸໄວ້ໃນ ສົນທິສັນຍາ ICESCR. ບັນດາມາດຕະຖານສາກົນຕໍ່ກັບ ສິດທິທາງດ້ານແຮງງານ ເຊິ່ງລວມເຖິງ ສິດໃນການສ້າງຕັ້ງ ແລະ ເຂົ້າຮ່ວມສະຫະພາບແຮງງານ ຍັງໄດ້ຮັບການປົກປ້ອງ ພາຍໃຕ້ຫຼັກການອື່ນໆອີກ ເຊັ່ນ ບັນດາອະນຸສັນຍາ ແລະ ຄໍາແນະນໍາ ທີ່ມີການຮັບຮອງເອົາ ພາຍໃຕ້ ອົງການແຮງງານສາກົນ (ILO).[5]

[5] ປະເທດກໍາປູເຈຍ ເປັນພາຄີ C087, C098, C029, C105, C100, C111, C138 ແລະ C182; ສ ປປ ລາວ ເປັນພາຄີ C029, C100, C111, C138, C182, C155 ແລະ C187; ປະເທດມຽນມາ ເປັນພາຄີ C087, C029, C138 ແລະ C182; ປະທດໄທ ເປັນພາຄີ C029, P029, C105, C100, C111, C138, C182 ແລະ C187; ປະເທດຫວຽດນາມ ເປັນພາຄີ C098, C029, C105, C100, C111, C138, C182, C155 ແລະ C187. ເບິ່ງຂໍ້ມູນເພີ່ມເຕີມທີ່: https://www.ilo.org/dyn/normlex/en/f?p=1000:10011:::NO:10011:P10011_DISPLAY_BY,P10011_CONVENTION_TYPE_CODE:1,F

ກົດໝາຍວ່າດ້ວຍ ສິດທິມະນຸດສາກົນ ຍັງໄດ້ກຳນົດໃຫ້ ລັດພາຄີ ມີພັນທະ ໃນການຮັບປະກັນວ່າ ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ບັນດາມວນຊົນ ສາມາດເຂົ້າເຖິງຂໍ້ມູນ ແລະ ມີໂອກາດໃນການມີສ່ວນຮ່ວມ ໃນຂະບວນການຕັດສິນໃຈທີ່ຈະມີຜົນກະທົບຕໍ່ເຂົາເຈົ້າ.

ຕໍ່ກັບພາກເອກະຊົນ, ຫຼັກການຄຳແນະນຳ ຂອງ ສະຫະປະຊາຊາດ ວ່າດ້ວຍ ການດຳເນີນທຸລະກິດ ແລະ ສິດທິມະນຸດ (UNGP) ເຊິ່ງເປັນ ມາດຕະຖານສາກົນ ທາງດ້ານການດຳເນີນທຸລະກິດ ແລະ ສິດທິມະນຸດ ໄດ້ກຳນົດວ່າ ບໍລິສັດຕ່າງໆ ຕ້ອງມີຄວາມຮັບຜິດຊອບ ໃນການ "ເຄົາລົບ" ສິດທິມະນຸດທີ່ມີການຮັບຮູ້ຢ່າງເປັນສາກົນ ແລະ ຕ້ອງມີຄວາມເຂົ້າໃຈຕໍ່ກັບສິ່ງດັ່ງກ່າວ ເນື່ອງຈາກໄດ້ຖືກກຳນົດໄວ້ ໃນບັນດາ ກົດໝາຍວ່າດ້ວຍສິດທິມະນຸດສາກົນ ເຊິ່ງລວມເຖິງ ຖະແຫຼງການສາກົນ ວ່າດ້ວຍສິດທິມະນຸດ (UDHR), ສົນທິສັນຍາວ່າດ້ວຍ ສິດທິພົນລະເຮືອນ ແລະ ສິດທິທາງການເມືອງ (ICCPR), ສົນທິສັນຍາ ICESCR ແລະ 8 ອະນຸສັນຍາຫຼັກ ຂອງ ILO ຕາມທີ່ໄດ້ກຳນົດໄວ້ ໃນຖະແຫຼງການ ວ່າດ້ວຍ ຫຼັກການພື້ນຖານ ແລະ ສິດທິໃນບ່ອນເຮັດວຽກ (DFPRW).

ຂໍ້ມູນທີ່ນຳສະເໜີໃນເອກະສານສະບັບນີ້ ແມ່ນໄດ້ຮວບຮວມມາຈາກ ບັນດາຕົວແທນຂອງ ອົງການຈັດຕັ້ງທາງສັງຄົມ ທີ່ໄດ້ເຂົ້າຮ່ວມ ກອງປະຊຸມອອນລາຍ ທີ່ຈັດຂຶ້ນໂດຍ ຄະນະກຳມະການ ນັກນິຕິສາດສາກົນ (International Commission of Jurists ຫຼື ICJ), ອົງການ EarthRights International (ERI) ແລະ Land Watch Thai ໃນວັນທີ 19 ກໍລະກົດ 2022 ທີ່ຜ່ານມາ.[6]

ໃນກອງປະຊຸມດັ່ງກ່າວ ອົງການຈັດຕັ້ງທາງສັງຄົມ ຈາກພາກພື້ນແມ່ນ້ຳຂອງ ໄດ້ມີການລາຍງານກ່ຽວກັບ ການລະເມີດສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳ ເຊິ່ງກວມເອົາ ສິດທິໃນການມີທີ່ຢູ່ອາໄສຢ່າງພຽງພໍ ແລະ ມີຄຸນນະພາບຊີວິດທີ່ດີ. ພ້ອມນັ້ນກໍ່ໄດ້ລາຍງານ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ການລະເມີດສິດທິແຮງງານ, ຄວາມລົ້ມເຫຼວ ໃນການຮັບປະກັນຄວາມໂປ່ງໃສ, ຂາດການປຶກສາຫາລື ແລະ ການສະແດງຄວາມຮັບຜິດຊອບທີ່ເກີດຈາກ ການພັດທະນາເຂດເສດຖະກິດພິເສດ (ເຊິ່ງມີລາຍລະອຽດຂ້າງລຸ່ມນີ້). ນອກນັ້ນ ກໍ່ຍັງໄດ້ມີການລາຍງານກໍລະນີສຶກສາ ຂອງໜ່ວຍງານພັດທະນາ ທີ່ໄດ້ມີການລົງທຶນໃນເຂດເສດຖະກິດພິເສດ ເຊິ່ງໄດ້ສົ່ງຜົນກະທົບ ຈາກການລະເມີດສິດທິມະນຸດ ພ້ອມທັງລາຍງານກ່ຽວກັບ ຄວາມລົ້ມເຫຼວ ຂອງໜ່ວຍງານພັດທະນາດັ່ງກ່າວ ຕໍ່ກັບຂະບວນການໃນການແກ້ໄຂບັນຫາທີ່ເກີດຂຶ້ນ ໂດຍສະເພາະ ແມ່ນການລະເມີດສິດທິມະນຸດ.[7]

[6] ຜູ້ເຂົ້າຮ່ວມຈຳນວນ 24 ທ່ານ ທີ່ເປັນນັກກົດໝາຍ, ຕົວແທນຈາກ ອົງການຈັດຕັ້ງທາງສັງຄົມ ແລະ ນັກວິຊາການ ຈາກປະເທດກຳປູເຈຍ, ລາວ, ມຽນມາ, ໄທ ແລະ ຫວຽດນາມ ໄດ້ເຂົ້າຮ່ວມກອງປະຊຸມນີ້. ຜູ້ເຂົ້າຮ່ວມໄດ້ນຳສະເໜີກ່ຽວກັບ ຜົນກະທົບທີ່ເກີດຂຶ້ນໃນປັດຈຸບັນ ແລະ ຜົນກະທົບຕໍ່ສິດທິມະນຸດ ທີ່ອາດຈະເກີດຂຶ້ນໃນອະນາຄົດ ຈາກການປະຕິບັດ ນະໂຍບາຍ ແລະ ກົດໝາຍທີ່ກ່ຽວກັບ ເຂດເສດຖະກິດພິເສດ ໃນແຕ່ລະປະເທດຂອງຜູ້ເຂົ້າຮ່ວມ

[7] ຍົກຕົວຢ່າງ ກໍລະນີຂອງ ເຂດເສດຖະກິດພິເສດ ທິລາວາ (Thilawa SEZ) ໃນປະເທດມຽນມາ, ເບິ່ງທີ່: ເວທີສົນທະນາ ຂອງ ສປຊ ກ່ຽວກັບ ການດຳເນີນທຸລະກິດ ແລະ ສິດທິມະນຸດ, 'ເຂດເສດຖະກິດພິເສດ ທິລາວາ (Thilawa SEZ), ມຽນມາ', 2015, ເຂົ້າເບິ່ງໄດ້ທີ່: https://www.ohchr.org/sites/default/files/Documents/Issues/Business/ForumSession4/ThilawaSpecialEconomicZoneMyanmar.pdf. ແລະ ເບິ່ງເພີ່ມເຕີມທີ່: Business & Human Rights Resource Centre, 'ມຽນມາ: ເຂດເສດຖະກິດພິເສດ ທິລາວາ ປະກາດໃຊ້ ກົນໄກຮ້ອງທຸກ, ແຕ່ ອົງການ NGO ມີຄຳເຫັນວ່າ ກົນໄກດັ່ງກ່າວບໍ່ສອດຄ່ອງກັບມາດຕະຖານສາກົນ;ພ້ອມກັບ ການຕອບກັບ ຈາກບໍລິສັດ ແລະ ໜ່ວຍງານອື່ນໆທີ່ກ່ຽວຂ້ອງ', 2018 : https://www.business-humanrights.org/en/latest-news/myanmar-thilawa-economic-zone-launches-complaint-mechanism-ngo-says-it-falls-short-of-intl-standards-inc-responses-from-company-other-agencies/

## ການລະເມີດສິດທິ ການມີທີ່ຢູ່ອາໄສທີ່ເໝາະສົມ ແລະ ມີຄຸນນະພາບຊີວິດທີ່ດີ

ຈາກແຫຼ່ງຂໍ້ມູນ ແລະ ສິ່ງທີ່ປະກົດເຫັນ ການພັດທະນາເຂດເສດຖະກິດພິເສດ (ລວມເຖິງເຂດເສດຖະກິດສະເພາະ) ແມ່ນໄດ້ມີການຍົກຍ້າຍຄົນທ້ອງຖິ່ນທີ່ເຄີຍດຳລົງຊີວິດຢູ່ມາກ່ອນ ເພື່ອເປີດທາງໃຫ້ມີກິດຈະກຳທາງດ້ານເສດຖະກິດເຂົ້າມາແທນທີ່. ການໂອນກຳມະສິດທີ່ດິນຄືນ ຈາກທີ່ເຄີຍເປັນຂອງຊຸມຊົນ ໃຫ້ເປັນຂອງ ຫົວໜ່ວຍທຸລະກິດ ແມ່ນມັກຈະມີການດຳເນີນການໂດຍ ລັດຖະບານ ແລະ ກຸ່ມບໍລິສັດ ທີ່ປາສະຈາກ ການປຶກສາຫາລືຢ່າງຖີ່ຖ້ວນກັບຊຸມຊົນ. ມີການລາຍງານຈາກຫຼາຍພື້ນທີ່ວ່າ ການພັດທະນາເຂດເສດຖະກິດພິເສດ ໄດ້ເຮັດໃຫ້ຫຼາຍຊຸມຊົນ ຖືກບັງຄັບໃຫ້ຍົກຍ້າຍອອກຈາກທີ່ດິນຂອງຕົນເອງ [8] ເຊິ່ງບາງຄັ້ງແມ່ນມີການແຈ້ງໃຫ້ຮູ້ ດ້ວຍຂໍ້ມູນພຽງເລັກນ້ອຍເທົ່ານັ້ນ ຫຼື ບໍ່ມີການແຈ້ງໃຫ້ຮູ້ເລີຍ ແລະ ມີການລະເມີດຫຼັກການສິດທິມະນຸດສາກົນ ວ່າດ້ວຍການຫ້າມ ການບັງຄັບໃຫ້ຍົກຍ້າຍອອກຈາກພື້ນທີ່. ນອກນັ້ນ ຍັງມີຫຼາຍກໍລະນີສຶກສາທີ່ສະແດງໃຫ້ເຫັນວ່າ ພື້ນທີ່ດິນ ທີ່ມີການຈັດສັນໃຫ້ສ້າງເປັນເຂດເສດຖະກິດ ເພື່ອດຳເນີນກິດຈະກຳທາງດ້ານອຸດສາກະກຳ ແມ່ນບໍ່ມີຄວາມເໝາະສົມ ສຳລັບກິດຈະກຳເຫຼົ່ານັ້ນ. ຍົກຕົວຢ່າງເຊັ່ນໃນປັດຈຸບັນມີຫຼາຍພື້ນທີ່ ທີ່ປູກເຂົ້າດັ້ງເດີມຢູ່ໃນເຂດຊົນນະບົດ ແລະ ເຂດຜະລິດກະສິກຳ ໄດ້ຖືກປ່ຽນເປັນພື້ນທີ່ ເພື່ອພັດທະນາເປັນເຂດອຸດສາຫະກຳ.[9] ນອກນັ້ນ ມີລາຍງານທີ່ຊີ້ໃຫ້ເຫັນວ່າ ສິດຄອບຄອງທີ່ດິນຕາມປະເພນີ, ລວມໝູ່ ຫຼື ຕາມຮີດຄອງດັ້ງເດີມ ຂອງຊຸມຊົນທີ່ເປັນຜູ້ໄດ້ຮັບຜົນກະທົບ ໄດ້ຖືກລະເມີດສິດ ໂດຍລັດຖະບານ ຫຼື ຜູ້ພັດທະນາ ເຂດເສດຖະກິດພິເສດ (ເຊິ່ງໃນຄວາມເປັນຈິງ ສິດທິເຫຼົ່ານັ້ນ ບໍ່ຖືກຮັບຮູ້ຢ່າງກົງໄປກົງມາ ຫຼື ຖືກປະຕິເສດ ຢູ່ໃນນິຕິກຳພາຍໃນປະເທດ ທີ່ມີການສ້າງຕັ້ງເຂດເສດຖະກິດພິເສດ). ໃນຫຼາຍກໍລະນີ ເຖິງແມ່ນວ່າ ເຂົາເຈົ້າຈະມີໃບຕາດິນ ທີ່ເປັນເອກະສານຮັບຮູ້ສິດຢ່າງເປັນທາງການ ກໍ່ຕາມ ແຕ່ການຊົດເຊີຍ ແກ່ຊຸມຊົນ ຫຼື ຜູ້ທີ່ໄດ້ຮັບຜົນກະທົບ ແມ່ນບໍ່ມີຄວາມເໝາະສົມ, ບໍ່ສອດຄ້ອງກັບສິ່ງທີ່ສູນເສຍໄປ ແລະ ໃນບາງຄັ້ງ ແມ່ນຂຶ້ນກັບຜົນຂອງການເຈລະຈາທີ່ບໍ່ມີຄວາມສົມດຸນກັນ.

ພ້ອມນັ້ນຍັງເຫັນວ່າ ການສະໜັບສະໜູນ ຈາກພາກລັດ ແລະ ຜູ້ພັດທະນາ ແກ່ຜູ້ທີ່ໄດ້ຮັບຜົນກະທົບ ແມ່ນບໍ່ພຽງພໍເຊິ່ງສົ່ງຜົນໃຫ້ ຜູ້ທີ່ຖືກຍົກຍ້າຍອອກຈາກພື້ນທີ່ ພົບກັບຄວາມລຳບາກ ໃນການເຂົ້າເຖິງສິ່ງອຳນວຍຄວາມສະດວກ ທີ່ມີຜົນຕໍ່ມີການດຳລົງຊີວິດຂອງເຂົາເຈົ້າ, ຕ້ອງປະເຊີນກັບລະດັບໜີ້ສິນທີ່ສູງຂຶ້ນເລື້ອຍໆ ແລະ ບາງຄົນຈົນບໍ່ມີທີ່ຢູ່ອາໄສ. ນອກນັ້ນ ຍັງມີການດຳເນີນຄະດີທາງອາຍາ ຕໍ່ຜູ້ທີ່ ຄັດຄ້ານໃນການ ຍ້າຍອອກຈາກທີ່ດິນ ຫຼື ປະຕິເສດທີ່ຈະອອກຈາກທີ່ດິນ ທີ່ເຂົາເຈົ້າເປັນເຈົ້າຂອງ ຫຼື ອາໄສເພື່ອການດຳລົງຊີວິດ.

## ຜົນກະທົບທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ

ບົດລາຍງານຫຼາຍສະບັບໄດ້ຊີ້ໃຫ້ເຫັນວ່າ ບັນດາກຸ່ມບໍລິສັດທີ່ມີສ່ວນຮ່ວມໃນການ ພັດທະນາ ແລະ ສ້າງຕັ້ງ ເຂດເສດຖະກິດພິເສດ ໃນບັນດາປະເທດລຸ່ມແມ່ນ້ຳຂອງ ມັກຈະບໍ່ປະຕິບັດຕາມກົດໝາຍ ແລະ ລະບຽບ ໃນການປົກປັກຮັກສາສິ່ງແວດລ້ອມ. ການພັດທະນາຢູ່ໃນເຂດເສດຖະກິດພິເສດ ໄດ້ສ້າງຜົນກະທົບທາງສິ່ງແວດລ້ອມ ເຊິ່ງຊຸມຊົນທີ່ອາໄສຢູ່ໃນເຂດໃກ້ຄຽງ ກໍ່ໄດ້ຮັບຜົນກະທົບໄປນຳ ເຊັ່ນ:

1. ມີການສ້າງ ຫຼື ກໍ່ໃຫ້ເກີດ ມົນທະພິດທາງອາກາດ ຈາກບັນດາໂຮງງານຕ່າງໆ
2. ເກີດມີໄພແຫ້ງແລ້ງ ຍ້ອນຂາດແຄນນ້ຳ ແລະ ຄວາມເຄັ່ງຕຶງ (ເນື່ອງຈາກຄວາມຂັດແຍ້ງ) ລະຫວ່າງຊຸມຊົນ ແລະ ບັນດາກິດຈະກຳທາງອຸດສາຫະກຳຕ່າງໆ

---

[8] ຍົກຕົວຢ່າງ ກໍລະນີຂອງ ເຂດເສດຖະກິດພິເສດ Kyauk Phyu ໃນປະເທດມຽນມາ, ເບິ່ງໃນບົດລາຍງານ: ICJ, 'ເຂດເສດຖະກິດພິເສດໃນປະເທດມຽນມາ: ພັນທະຂອງລັດ ໃນການປົກປ້ອງສິດທິມະນຸດ', 2017, ໜ້າທີ 49-68.

[9] ເບິ່ງ ຍົກຕົວຢ່າງຈາກບົດລາຍງານ: ICJ, 'ຜົນກະທົບທາງດ້ານສິດທິມະນຸດ ຈາກການພັດທະນາ ລະບຽງເຂດເສດຖະກິດພາກຕາເວັນອອກ ແລະ ເຂດເສດຖະກິດພິເສດ ໃນປະເທດໄທ', 2020, ໜ້າທີ 54.

3. ມີການກຳຈັດສິ່ງເສດເຫຼືອ ຈາກເຂດອຸດສາຫະກຳ ຢ່າງຜິດກົດໝາຍ ເຊິ່ງສົ່ງຜົນໃຫ້ມີສານເຄມີ ປົນເປື້ອນຢູ່ໃນດິນ ແລະ ນ້ຳ
4. ມີການປ່ອຍນ້ຳເປື້ອນອອກຈາກ ເຂດອຸດສາຫະກຳ ສູ່ ຄອງນ້ຳສາທາລະນະ ແລະ ເຂດທີ່ຊຸມຊົນອາໄສຢູ່
5. ລະບົບນິເວດ ແລະ ເຂດທີ່ຢູ່ອາໄສ ຂອງສັດປ່າ ຖືກທຳລາຍ ຈາກການກໍ່ສ້າງ ແລະ ດຳເນີນງານ ເຂດເສດຖະກິດພິເສດ

ຫຼາຍໂຄງການ ພະຍາຍາມຫຼີກລ່ຽງ ການດຳເນີນ ສຶກສາຜົນກະທົບທາງສິ່ງແວດລ້ອມ ຫຼື ຖ້າມີການສຶກສາຜົນກະທົບ ໃນຫຼາຍໆຄັ້ງ ບົດປະເມີນຜົນກະທົບສິ່ງແວດລ້ອມ ແມ່ນດຳເນີນການ ຢ່າງບໍ່ມີຄວາມຮອບຄອບ, ປາສະຈາກ ການມີສ່ວນຮ່ວມຂອງມວນຊົນຢ່າງແທ້ຈິງ ແລະ ການມີສ່ວນຮ່ວມຂອງຊຸມຊົນທີ່ໄດ້ຮັບຜົນກະທົບກໍ່ມີຢ່າງຈຳກັດ. ພ້ອມນັ້ນ ຍັງມີການລາຍງານວ່າ ບໍ່ມີຄວາມໂປ່ງໃສ ແລະ ລະເລີຍຫຼາຍຂະບວນການທີ່ສຳຄັນ ໃນການດຳເນີນ ການສຶກສາຜົນກະທົບທາງດ້ານສິ່ງແວດລ້ອມໃນຫຼາຍບໍລິສັດ. ພ້ອມນັ້ນ ມີຫຼາຍບົດລາຍງານຊີ້ໃຫ້ເຫັນວ່າ ຂະບວນການໃນການທົບທວນ ບົດປະເມີນຜົນກະທົບສິ່ງແວດລ້ອມ ແມ່ນບໍ່ມີຄວາມເປັນເອກະລາດ ໃນການຈັດການກັບຄວາມກັງວົນ ຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ໂດຍສະເພາະ ແມ່ນກໍລະນີ ເມື່ອພົບເຫັນວ່າ ໜ່ວຍງານພາກລັດທີ່ກ່ຽວຂ້ອງ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຂອງຕົນເອງ ຕາມທີ່ກຳນົດໄວ້ໃນກົດໝາຍ ຫຼື ລະບຽບການ.

**ການລະເມີດສິດທິແຮງງານ**

ໃນຫຼາຍກໍລະນີເຫັນວ່າ ນາຍຈ້າງບໍ່ຄ່ອຍໃຫ້ຄວາມສຳຄັນ ຫຼື ບໍ່ປະຕິບັດຕາມ ກົດໝາຍວ່າດ້ວຍ ການປົກປ້ອງແຮງງານ ແລະ ການບັງຄັບໃຊ້ກົດໝາຍດັ່ງກ່າວ ແມ່ນຍັງບໍ່ມີຄວາມເຄັ່ງຂັດ ແລະ ຮັດກຸມ; ແລະ ຍິ່ງເພື່ອເປັນສ້າງຄວາມສົນໃຈໃຫ້ແກ່ ນັກທຸລະກິດ ເພື່ອໃຫ້ເຂົາເຈົ້າ ເຂົ້າມາລົງທຶນໃນເຂດເສດຖະກິດພິເສດແລ້ວ ຍິ່ງພົບເຫັນວ່າ ມີການສ້າງເງື່ອນໄຂການຈັດຫາແຮງງານທີ່ມີຄວາມຍືດຫຍຸ່ນ ໃນຫຼາຍພື້ນທີ່. ຕໍ່ກັບສະຖານະການດັ່ງກ່າວ ໄດ້ມີການລາຍງານຕໍ່ກັບຄວາມກັງວົນຫຼາຍຢ່າງເຊັ່ນ ຄ່າແຮງງານຂັ້ນຕ່ຳທີ່ບໍ່ພຽງພໍ ຕໍ່ການດຳລົງຊີວິດທີ່ດີ, ມີການຈ່າຍຄ່າແຮງງານທີ່ຕ່ຳເກີນໄປ, ການບັງຄັບໃຫ້ເຮັດວຽກລ່ວງເວລາ, ການຈຳກັດມື້ພັກ, ການປະຕິເສດ ສິດທິໃນການລາພັກ ເພື່ອເກີດລູກ, ການເລີກຈ້າງງານແມ່ຍິງຖືພາ, ສະພາບການເປັນຢູ່ຂອງແຮງງານທີ່ບໍ່ດີ ແລະ ບັນຫາກ່ຽວກັບຄວາມປອດໄພ. ໃນບາງກໍລະນີ ມີການລາຍງານວ່ານາຍຈ້າງ ປະຕິບັດກັບແຮງງານຄືກັບຂ້າທາດ ເຊິ່ງລວມເຖິງ ການບັງຄັບໃຊ້ແຮງງານ ແລະ ການຄ້າມະນຸດ ທີ່ເກີດຂຶ້ນໃນບາງເຂດເສດຖະກິດພິເສດ. ມີການລາຍງານໃຫ້ຮູ້ອີກວ່າ ມີນາຍຈ້າງຫຼາຍຄົນ ໃຊ້ວິທີການເຮັດສັນຍາຈ້າງງານໃນໄລຍະສັ້ນ ເພື່ອເປັນການຫຼີກລ່ຽງ ຂໍ້ກຳນົດຕ່າງໆທີ່ກຳນົດໄວ້ ໃນກົດໝາຍການປົກປ້ອງທາງສັງຄົມ ທີ່ເຂົາເຈົ້າຕ້ອງປະຕິບັດ. ພ້ອມນັ້ນ ມີບາງບໍລິສັດ ບໍ່ໄດ້ລົງທະບຽນໃນການດຳເນີນທຸລະກິດ ເຊິ່ງສົ່ງຜົນໃຫ້ລູກຈ້າງບໍ່ໄດ້ຮັບສິດ ຫຼື ມີຂໍ້ຈຳກັດໃນການໄດ້ຮັບການປົກປ້ອງຈາກກົດໝາຍໃນເວລາທີ່ມີບັນຫາ; ລວມເຖິງບັນດາກົນໄກການແກ້ໄຂຂໍ້ຂັດແຍ່ງ ແມ່ນບໍ່ສາມາດນຳໄປຈັດຕັ້ງປະຕິບັດທີ່ເຫັນຜົນໄດ້. ນອກນັ້ນ ຍັງມີລາຍງານວ່າ ບັນດາແຮງງານ ບໍ່ມີອິດສະຫຼະ ໃນການສ້າງຕັ້ງສະພະພາບແຮງງານ ແລະ ເມື່ອໃດທີ່ເຂົາເຈົ້າພະຍາຍາມລວມກຸ່ມກັນ ພວກເຂົາມັກຈະຖືກເລືອກປະຕິບັດ ບໍ່ວ່າຈະເປັນການບໍ່ຖືກຈ້າງງານ ຫຼື ການກຳນົດເງື່ອນໄຂໃນການເຮັດວຽກ, ຖືກຂົ່ມຂູ່, ຖືກໄລ່ອອກ, ມີການໃຊ້ຄວາມຮຸນແຮງ ແລະ ສວຍໃຊ້ຂະບວນການຍຸຕິທຳ ເພື່ອຄຸກຄາມ ຜູ້ທີ່ເປັນສະມາຊິກ ແລະ ມີສ່ວນຮ່ວມກັບ ສະຫະພາບແຮງງານ.

**ຄວາມລົ້ມເຫຼວ ໃນການຮັບປະກັນຄວາມໂປ່ງໃສ, ການປຶກສາຫາລື ແລະ ຄວາມຮັບຜິດຊອບ**

ການຂາດ ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ ຂອງໜ່ວຍງານທີ່ກ່ຽວຂ້ອງ ຕໍ່ກັບ ການຕັດສິນ, ການວາງແຜນ ແລະ ການກໍ່ສ້າງ ລວມເຖິງໃນລະຫວ່າງ ການດໍາເນີນງານກິດຈະກໍາພາຍໃນ ເຂດເສດຖະກິດພິເສດ ແມ່ນເປັນບັນຫາໃຫຍ່ ທີ່ເກີດຂຶ້ນຢູ່ບັນດາປະເທດ ລຸ່ມແມ່ນໍ້າຂອງ. ຜູ້ທີ່ໄດ້ຮັບຜົນກະທົບຈາກ ການສ້າງຕັ້ງ ເຂດເສດຖະກິດພິເສດ ແມ່ນບໍ່ມີໂອກາດໃນການມີສ່ວນຮ່ວມ ຫຼື ເຈລະຈາຕໍ່ລອງ ຕໍ່ກັບບັນດາຂໍ້ຕົກລົງຕ່າງໆ ທີ່ກ່ຽວຂ້ອງກັບ ການອອກແບບໂຄງການ ຫຼື ແບບແຜນສໍາລັບ ການດໍາລົງຊີວິດໃນອະນາຄົດຂອງຕົນເອງ. ໃນທຸກຄັ້ງ ເມື່ອມີການພົບປະກັນ ລະຫວ່າງ ໜ່ວຍງານຈາກ ເຂດເສດຖະກິດພິເສດ ແລະ ຊຸມຊົນ ເກືອບຈະບໍ່ມີກໍລະນີໃດໆເລີຍ ທີ່ສະແດງໃຫ້ເຫັນວ່າ ເຂົາເຈົ້າ ມີການຮັບເອົາຄໍາຄິດເຫັນ ຫຼື ຂໍ້ສະເໜີ ຂອງຊຸມຊົນ ມາພິຈາລະນາຕໍ່ກັບການຕັດສິນໃຈ ຫຼື ການວາງແຜນ ການພັດທະນາເຂດເສດຖະກິດພິເສດ. ພ້ອມນັ້ນ ການຂາດຄວາມໂປ່ງໃສ ໃນການລາຍງານກ່ຽວກັບ ລາຍໄດ້ ແລະ ການສ້າງລາຍຮັບຈາກ ເຂດເສດຖະກິດພິເສດ ຍິ່ງເປັນການເປີດໂອກາດ ໃຫ້ມີການສໍ້ລາດບັງຫຼວງ ນັບມື້ນັບຫຼາຍຂຶ້ນ.

ໃນພາກພື້ນລຸ່ມແມ່ນໍ້າຂອງ ໜ່ວຍງານຄຸ້ມຄອງ ເຂດເສດຖະກິດພິເສດ ແມ່ນປະກອບມີພຽງແຕ່ ຕົວແທນ ຈາກລັດຖະບານ ແລະ ຜູ້ລົງທຶນ ເທົ່ານັ້ນ. ເມື່ອບໍ່ໄດ້ມີການດໍາເນີນຂະບວນການປຶກສາຫາລືໃດໆ ຈຶ່ງເຮັດໃຫ້ພວກເຂົາ ມີອໍານາດຫຼາຍໃນການຕັດສິນໃຈ; ໃນຂະນະດຽວກັນ ເຂົາເຈົ້າກໍ່ບໍ່ຈໍາເປັນຕ້ອງມີພັນທະສະເພາະເຈາະຈົງ ເພື່ອປຶກສາຫາລື ຢ່າງເປັນປະຈໍາ ກັບຊຸມຊົນທີ່ໄດ້ຮັບຜົນກະທົບ ໃນການນໍາເອົາຄໍາຄິດເຫັນຂອງເຂົາເຈົ້າມາພິຈາລະນາ ໃນຂະບວນການຕັດສິນໃຈ. ດ້ວຍເຫດນີ້ ຈຶ່ງເປັນເລື່ອງທີ່ຍາກຫຼາຍ ສໍາລັບຜູ້ທີ່ໄດ້ຮັບຜົນກະທົບ ທີ່ຈະມີສ່ວນຮ່ວມໃນການສົນທະນາ, ການເຈລະຈາຕໍ່ລອງ ຫຼື ຮ້ອງຟ້ອງຕໍ່ສານ ຕໍ່ກັບໜ່ວຍງານທີ່ມີສ່ວນຮ່ວມໃນການຕັດສິນໃຈ ໃນການພັດທະນາເຂດເສດຖະກິດພິເສດ. ນອກນີ້ ຍັງມີລາຍງານວ່າ ເຂດເສດຖະກິດພິເສດ ໄດ້ມີການຄຸ້ມຄອງຢ່າງເຂັ້ມງວດ ໂດຍບໍລິສັດເອງ ເຊິ່ງເຮັດໃຫ້ ບົດບາດຂອງ ລັດຖະບານ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍ ຢູ່ພາຍໃນປະເທດ ມີອໍານາດຢ່າງຈໍາກັດ ໃນການກວດສອບ ແລະ ຕິດຕາມກິດຈະກໍາຕ່າງໆທີ່ເກີດຂຶ້ນຢູ່ພາຍໃນ ເຂດເສດຖະກິດພິເສດ.

**ເບິ່ງຂໍ້ມູນ ແລະ ກໍລະນີສຶກສາ ເພີ່ມເຕີມໄດ້ທີ່:**

‘ເຂດເສດຖະກິດພິເສດ ໃນມຽນມາ ແລະ ໜ້າທີ່ຂອງລັດ ໃນການປົກປ້ອງສິດທິມະນຸດ’, 2017, ໂດຍ ICJ

‘ຜົນກະທົບທາງດ້ານສິດທິມະນຸດ ທີ່ເກີດຈາກການພັດທະນາລະບຽງເສດຖະກິດ ພາກຕາເວັນອອກ ແລະ ເຂດເສດຖະກິດພິເສດ ໃນປະເທດໄທ’, 2019, ໂດຍ ICJ

‘ເຂດເສດຖະກິດພິເສດ ແລະ ການຍຶດຄອງທີ່ດິນ ຢູ່ພາກພື້ນແມ່ນໍ້າຂອງ’, ໂດຍ Kuaycharoen, P., Longcharoen, L., Chotiwan, P., Sukin, K. ແລະ ນັກວິໄຈເອກະລາດ ຈາກລາວ: ກຸງເທບ, 2020. ໂດຍ Land Watch Thai

'ບົດສະຫຼຸບໂດຍຫຍໍ້ ກ່ຽວກັບ ເຂດເສດຖະກິດພິເສດ ແລະ ສິດທິມະນຸດ ໃນປະເທດກຳປູເຈຍ', 2018, ໂດຍ ສູນ ເພື່ອສິດທິມະນຸດ ແຫ່ງຈຳປູເຈຍ (CCHR); ແລະ ບົດສະຫຼຸບໂດຍຫຍໍ້ອື່ນໆທີ່ກ່ຽວຂ້ອງ

'ເຂດເສດຖະກະດພິເສດ ແລະ ການກັກຕວງຜົນປະໂຫຍດ ຈາກພາກພື້ນແມ່ນໍ້າຂອງ: ກໍລະນີສຶກສາກ່ຽວກັບ ການຄອບຄອງ ແລະ ການສ້າງຜົນກຳໄລ ຈາກທີ່ດິນ ແລະ ແຮງງານ ໃນເຂດເສດຖະກິດພິເສດ ໃນປະເທດກຳປູເຈຍ ແລະ ມຽນມາ', ໂດຍ Charlie Thame, ກຸງເທບ, 2017. ໂດຍ Focus on the Global South

## ຂໍ້ສະເໜີແນະ

### ຂໍ້ສະເໜີຕໍ່ ລັດຖະບານ ໃນພາກພື້ນແມ່ນໍ້າຂອງ:

1. ກວດສອບ ສະພາບການທາງດ້ານເສດຖະກິດ ຈາກການພັດທະນາເຂດເສດຖະກິດພິເສດ ແລະ ຜົນກະທົບຕໍ່ກັບສິດທິມະນຸດ ຂອງບຸກຄົນ ແລະ ຊຸມຊົນ ທີ່ໄດ້ຮັບຜົນກະທົບ; ພ້ອມທັງດຳເນີນການ ຢ່າງເໝາະສົມ ເພື່ອແກ້ໄຂ ແລະ ໂຈະການປະຕິບັດນະໂຍບາຍ ແລະ ໂຄງການຕ່າງໆ ທີ່ບໍ່ໄດ້ນຳມາເຊິ່ງຜົນປະໂຫຍດທາງດ້ານເສດຖະກິດທີ່ແທ້ຈິງ ຫຼື ມີການລະເມີດຫຼັກການ ແລະ ກົດໝາຍສາກົນ ແລະ ພາຍໃນປະເທດ ເຊິ່ງລວມເຖິງ ກົດໝາຍ ແລະ ມາດຕະຖານ ທາງດ້ານສິດທິມະນຸດ
2. ຮັບຮອງເອົາແນວທາງປະຕິບັດ ຕາມຫຼັກການສິດທິມະນຸດ ໃນໂຄງການພັດທະນາ ເຂດເສດຖະກິດພິເສດ ແລະ ຮັບປະກັນວ່າ ການຕັດສິນໃຈໃດໆກໍ່ຕາມທີ່ມີຂຶ້ນ ແມ່ນຕ້ອງຜ່ານການປຶກສາຫາລືຮ່ວມກັບ ບຸກຄົນ ແລະ ຊຸມຊົນ ທີ່ມີສ່ວນກ່ຽວຂ້ອງກັບ ການພັດທະນາເຂດເສດຖະກິດພິເສດ ທີ່ອາດຈະສ້າງຜົນກະທົບທາງລົບຕໍ່ຊຸມຊົນ ແລະ ສິ່ງແວດລ້ອມ
3. ສ້າງຕັ້ງ ໜ່ວຍງານໜຶ່ງ ທີ່ມີໜ້າທີ່ສະເພາະຂຶ້ນມາ ເພື່ອເຮັດໜ້າທີ່ ໃນການປຶກສາຫາລື ກັບຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງອື່ນໆ ໂດຍກົງ ພ້ອມທັງ ເຮັດໜ້າທີ່ໃນການຕິດຕາມ ໂຄງການຕ່າງໆ; ແລະ ທີ່ສຳຄັນ ໜ່ວຍງານນີ້ ຄວນປະກອບມີຕົວແທນຈາກ ພາກປະຊາສັງຄົມ, ສະຫະພາບແຮງງານ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ ຮ່ວມຢູ່ດ້ວຍ
4. ຮັບປະກັນ ຄວາມໂປ່ງໃສ ເຊິ່ງລວມເຖິງ ການເປີດເຜີຍຂໍ້ມູນ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບເຂດເສດຖະກິດພິເສດ ແກ່ມວນຊົນໃຫ້ສາມາດເຂົ້າເຖິງໄດ້
5. ຮັບປະກັນວ່າ ການດຳເນີນ ການຍົກຍ້າຍຜູ້ຄົນອອກຈາກພື້ນທີ່ ເປັນທາງເລືອກສຸດທ້າຍທີ່ຈະປະຕິບັດ ຫຼັງຈາກທີ່ມີການສຶກສາເຖິງທາງເລືອກອື່ນໆ ທີ່ມີຄວາມເປັນໄປໄດ້ທັງໝົດແລ້ວ. ຫຼັກການໃນການປົກປ້ອງທີ່ບັນຍັດໄວ້ໃນ ກົດໝາຍສິດທິມະນຸດສາກົນ ຄວນມີການນຳມາໃຊ້ ແລະ ປະຕິບັດຕາມຢ່າງເຄັ່ງຄັດ ກ່ອນທີ່ຈະມີການຍົກຍ້າຍຜູ້ຄົນອອກຈາກພື້ນທີ່ ໂດຍສະເພາະ ແມ່ນຕ້ອງມີຂະບວນການປຶກສາຫາລື ຢ່າງຈິງຈັງ, ມີຂໍ້ກຳນົດໃນ

ການນຳໃຊ້ມາດຕະການໃນການປົກປ້ອງ, ຊ່ອງທາງການຊ່ວຍເຫຼືອທາງກົດໝາຍ, ການຊົດເຊີຍ ແລະ ທາງເລືອກໃນການເຂົ້າເຖິງແຫຼ່ງທີ່ຢູ່ອາໄສ ຢ່າງເໝາະສົມ

6. ຮັບຮູ້ ຄຸນຄ່າ ທາງສັງຄົມ, ວັດທະນາທຳ, ຄວາມເຊື່ອຖື, ເສດຖະກິດ, ສິ່ງແວດລ້ອມ ແລະ ການເມືອງ ຕໍ່ກັບທີ່ດິນ ຂອງຊຸມຊົນ ແລະ ຮັບຮູ້ເຖິງ ສິດການຄອງຄອງທີ່ດິນ ຕາມປະເພນີ, ລວມໝູ່, ຮີດຄອງປະເພນີ ແລະ ປະຕິບັດຕາມຫຼັກການ ການຍິນຍອມ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ຕໍ່ກັບການນຳໃຊ້ທີ່ດິນຂອງ ຊຸມຊົນ ຊົນເຜົ່າພື້ນເມືອງ
7. ຮັບປະກັນວ່າ ການປະເມີນຜົນກະທົບຈາກການຍົກຍ້າຍ ແມ່ນມີການດຳເນີນ ກ່ອນມີການລິເລີ່ມໂຄງການ ທີ່ອາດສົ່ງຜົນຕໍ່ການຍົກຍ້າຍ ແລະ ມີຜົນກະທົບທາງລົບອື່ນໆ ໂດຍຕ້ອງມີການປະຕິບັດ ການປຶກສາຫາລືຢ່າງມີສ່ວນຮ່ວມຈາກ ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ຕ້ອງປະຕິບັດຕາມຫຼັກການ ທີ່ສອດຄ່ອງກັບ ມາດຕະຖານ ແລະ ກົດໝາຍ ສິດທິມະນຸດສາກົນ
8. ຮັບປະກັນວ່າ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປະເມີນຜົນກະທົບ ທາງສິ່ງແວດລ້ອມແບບຍຸດທະສາດ ແມ່ນດຳເນີນ ອີງຕາມຫຼັກການ ສິດທິມະນຸດສາກົນ ແລະ ຕາມແນວທາງການປະຕິບັດທີ່ດີ
9. ຮັບປະກັນວ່າ ການກຳນົດຄ່າແຮງງານຂັ້ນຕ່ຳນັ້ນ ປົກປ້ອງ ສິດທິຂອງແຮງງານ ຢ່າງມີຄວາມຍຸຕິທຳ ແລະ ສ້າງເງື່ອນໄຂ ທີ່ເອື້ອອຳນວຍໃນການເຮັດວຽກ ເພື່ອຮັບປະກັນວ່າ ລາຍໄດ້ ພຽງພໍຕໍ່ກັບການລ້ຽງຊີບ ແລະ ການດຳລົງຊີວິດ
10. ຮັບປະກັນວ່າ ແຮງງານທີ່ເຮັດວຽກໃນເຂດເສດຖະກິດພິເສດ ບໍ່ວ່າຈະເປັນຄົນສັນຊາດໃດ ຫຼື ຢູ່ໃນສະຖານະແຮງງານເຄື່ອນຍ້າຍ ກໍ່ຕ້ອງໄດ້ຮັບການປະຕິບັດຢ່າງເທົ່າທຽມກັນຄືກັນກັບແຮງງານຄົນອື່ນໆ ໂດຍບໍ່ມີການເລືອກປະຕິບັດ ບໍ່ວ່າຈະເປັນ ການໄດ້ຮັບຄ່າຕອບແທນ, ເງື່ອນໄຂຂອງການເຮັດວຽກ, ການປົກປ້ອງທາງສັງຄົມ ແລະ ສາມາດໄດ້ເຂົ້າເຖິງ ການເຮັດວຽກທີ່ດີ ຢ່າງເທົ່າທຽມກັນ. ພ້ອມນັ້ນ ຕ້ອງມີການກວດສອບຢ່າງເລັ່ງດ່ວນ ຫາກມີການລາຍງານກ່ຽວກັບ ການຄ້າມະນຸດ ແລະ ການບັງຄັບໃຊ້ແຮງງານ ເກີດຂຶ້ນໃນເຂດເສດຖະກິດພິເສດ
11. ຍົກເລີກ ຫຼື ລົບລ້າງ ສິ່ງທີ່ກີດຂວາງ ທາງດ້ານກົດໝາຍ ແລະ ແນວທາງປະຕິບັດ ທີ່ກີດກັ້ນ ແຮງງານ ບໍ່ໃຫ້ມີສິດເສລີ ໃນການສ້າງຕັ້ງກຸ່ມ ຫຼື ຈັດຕັ້ງສະມາຄົມຂຶ້ນ ເພື່ອເປັນແນວທາງໃນການເຈລະຈາຕໍ່ລອງຮ່ວມກັນ
12. ຮັບປະກັນວ່າ ຊ່ອງທາງ ການຊົດເຊີຍຄວາມເສຍຫາຍຕາມລະບົບຕຸລາການ ແລະ ການຊົດເຊີຍຄວາມເສຍຫາຍທີ່ບໍ່ຢູ່ໃນລະບົບຕຸລາການ ມີປະສິດທິພາບ, ຖ່ວງທັນເວລາ ແລະ ສາມາດເຂົ້າເຖິງໄດ້ ສຳລັບຜູ້ທີ່ໄດ້ຮັບຜົນກະທົບ ຈາກການຖືກລະເມີດສິດທິມະນຸດ ຈາກການພັດທະນາ ແລະ ການດຳເນີນກິດຈະກຳການ ຂອງເຂດເສດຖະກິດພິເສດ
13. ຮັບປະກັນ ການສະໜັບສະໜູນ, ການສະໜອງການຝຶກອົບຮົມ ແລະ ການເສີມສ້າງຄວາມອາດສາມາດ ແລະ ຄວາມເຂົ້າໃຈ ຢ່າງພຽງພໍ ແກ່ໜ່ວຍງານທີ່ກ່ຽວຂ້ອງ ໃນການອະນຸມັດ, ອະນຸຍາດ ແລະ ການອອກໃບອະນຸຍາດ ແລະ ການຕິກລົງກ່ຽວກັບ ການດຳເນີນງານ ໃນເຂດເສດຖະກິດພິເສດ ເຊິ່ງລວມເຖິງ ການເກັບກຳຂໍ້ມູນທີ່ກ່ຽວຂ້ອງກັບ ຜົນກະທົບທາງດ້ານສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ວັດທະນາທຳ, ປະເມີນຄວາມເສຍຫາຍ ແລະ ຟື້ນຟູ ຄວາມເສຍຫາຍທາງດ້ານຊັບພະຍາກອນທຳມະຊາດໃຫ້ຢູ່ໃນສະພາບທີ່ບໍ່ມີການປົນເປື້ອນຈາກສານເຄມີ ຫຼື ສານພິດຕ່າງໆ
14. ເສີມສ້າງຄວາມອາດສາມາດ ແລະ ຄວາມເປັນເອກະລາດ ຂອງອົງການຕຸລາການ ແລະ ສະຖາບັນສິດທິມະນຸດແຫ່ງຊາດ ເພື່ອຮັບປະກັນວ່າ ພວກເຂົາ ສາມາດເຮັດໜ້າທີ່ຢ່າງຕັ້ງໜ້າ ໃນການປົກປ້ອງ ສິດທິມະນຸດ ຕໍ່ກັບການພັດທະນາ ແລະ ດຳເນີນງານ ຂອງບັນດາເຂດເສດຖະກິດພິເສດ

**ຂໍ້ສະເໜີແນະຕໍ່ ສະຫະປະຊາຊາດ (UN) ແລະ ຄະນະກຳມະການ ສິດທິມະນຸດລະຫວ່າງປະເທດອາຊຽນ (AICHR):**

1. ມີສ່ວນຮ່ວມຢ່າງຈິງຈັງ ໃນການຕິດຕາມ, ລົງພື້ນທີ່, ນຳສະເໜີ ແລະ ປະກອບຄຳຄິດເຫັນ ຕໍ່ກັບບັນຫາ ທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການພັດທະນາເຂດເສດຖະກິດພິເສດ ເຊັ່ນ ການລາຍງານກ່ຽວກັບການ ຍຶດຄອງທີ່ດິນໂດຍບໍ່ສອດຄ້ອງກັບກົດໝາຍ, ການເປີດໂອກາດໃຫ້ມີແຮງງານຜິດກົດໝາຍ, ການລະເລີຍທີ່ກໍ່ໃຫ້ເກີດຜົນກະທົບທີ່ເປັນອັນຕະລາຍ ຕໍ່ສິ່ງແວດລ້ອມ, ການລະເມີດສິດທິມະນຸດ; ພ້ອມທັງສຶກສາເບິ່ງ ຜົນປະໂຫຍດທາງດ້ານເສດຖະກິດ ຈາກການພັດທະນາເຂດເສດຖະກິດພິເສດ
2. ຫາກມີຄວາມເປັນໄປໄດ້ ແລະ ຄວາມສົມເຫດສົມຜົນ ຄວນປະສານສົມທົບ ກັບ ສະມາຊິກສະພາແຫ່ງຊາດ, ພັກການເມືອງ, ພະນັກງານລັດຖະກອນ ແລະ ໜ່ວຍງານ ເຂດເສດຖະກິດພິເສດ ເພື່ອຊຸກຍູ້ເຂົາເຈົ້າ ໃຫ້ຮັບຮອງ ແລະ ບັງຄັບໃຊ້ກົດໝາຍ, ນະໂຍບາຍ ແລະ ແນວທາງປະຕິບັດ ໃນການຄຸ້ມຄອງ ເຂດເສດຖະກິດພິເສດໃຫ້ມີຄວາມສອດຄ່ອງກັບ ຫຼັກການ ແລະ ກົດໝາຍ ສິດທິມະນຸດສາກົນ
3. ໃຫ້ການຮ່ວມມື ແລະ ຊ່ວຍເຫຼືອ ທັງໃນລະດັບສາກົນ ແລະ ພາຍໃນປະເທດ ທາງດ້ານ ກົດໝາຍ, ວິຊາການ ແລະ ເທັກໂນໂລຢີ ແກ່ ໜ່ວຍງານລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອໃຫ້ເຂົາເຈົ້າ ສາມາດສະໜັບສະໜູນຢ່າງມີປະສິດທິຜົນ ໃນການປະຕິບັດຕາມ ຫຼັກການສິດທິມະນຸດ ໃນກໍລະນີຂອງການພັດທະນາເຂດເສດຖະກິດພິເສດ

**ຂໍ້ສະເໜີແນະ ຕໍ່ຜູ້ໃຫ້ທຶນ ແລະ ອົງການເພື່ອການພັດທະນາ:**

1. ຮັບປະກັນວ່າ ການຊ່ວຍເຫຼືອດ້ານການພັດທະນາ ຈະບໍ່ສະໜອງທຶນໃຫ້ແກ່ໂຄງການ ເຂດເສດຖະກິດພິເສດທີ່ມີຄວາມສ່ຽງຕໍ່ການລະເມີດສິດທິມະນຸດ ແລະ ຄວນໂຈະການຊ່ວຍເຫຼືອ ໂຄງການທີ່ເຫັນວ່າ ມີການລະເມີດຫຼັກການ ສິດທິມະນຸດ; ພ້ອມທັງ ມີຄວາມຈຳເປັນໃນການດຳເນີນ ຂະບວນການ ກວດສອບດ້ານສິດທິມະນຸດຢ່າງຮອບດ້ານ ເພື່ອຮັບປະກັນວ່າ ເຂດເສດຖະກິດພິເສດທີ່ສ້າງຕັ້ງ ແລະ ດຳເນີນງານນັ້ນ ຈະບໍ່ມີການລະເມີດສິດທິມະນຸດ
2. ຮັບປະກັນວ່າ ນະໂຍບາຍການລົງທຶນ ສະໜັບສະໜູນ ການປົກປ້ອງ ສິດທິມະນຸດ, ສິ່ງແວດລ້ອມ, ສິດທິແຮງງານ ແລະ ການປະຕິບັດຕາມ ມາດຕະການປົກປ້ອງ ສິດທິດ້ານຕ່າງໆ ເຊັ່ນ ການຮັບປະກັນວ່າ ສັນຍາເງິນກູ້ ມີການອ້າງອີງເຖິງ ການເຄົາລົບສິດທິມະນຸດ ເປັນຕົ້ນ
3. ສະແດງຄວາມຮັບຮູ້ຢ່າງຊັດເຈນວ່າ ການລະເມີດສິດທິມະນຸດ ແມ່ນໄດ້ເກີດຂຶ້ນໃນບາງໂຄງການທີ່ ກຳລັງ ຫຼື ໄດ້ຮັບການສະໜັບສະໜູນທາງດ້ານການເງິນຈາກສະຖາບັນການພັດທະນາ ແລະ ຕ້ອງຊອກຫາແນວທາງໃນການແກ້ໄຂ ການລະເມີດສິດທິຕ່າງໆທີ່ເກີດຂຶ້ນນັ້ນ ຢ່າງມີສ່ວນຮ່ວມຈາກຊຸມຊົນທີ່ໄດ້ຮັບຜົນກະທົບ

**ຂໍ້ສະເໜີແນະຕໍ່ ພາກເອກະຊົນ:**

1. ດຳເນີນທຸລະກິດ ໂດຍໃຫ້ມີຄວາມສອດຄ້ອງກັບ ຫຼັກການ ຄຳແນະນຳ ຂອງ ສະຫະປະຊາຊາດ ກ່ຽວກັບການດຳເນີນທຸລະກິດ ແລະ ສິດທິມະນຸດ (UNGP)
2. ປະຕິບັດຕາມ ທຸກກົດໝາຍພາຍໃນປະເທດ ໂດຍສະເພາະທີ່ກ່ຽວກັບກັບ ການປົກປັກຮັກສາສິ່ງແວດລ້ອມ, ແຮງງານ ແລະ ສິດທິມະນຸດ ລວມທັງ ບັນດາລະບຽບ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງ

3. ດຳເນີນ ຂະບວນການກວດສອບ ດ້ານສິດທິມະນຸດຢ່າງຮອບດ້ານ (HRDD) ເພື່ອເປັນການຮັບປະກັນວ່າ ການລົງທຶນ ແມ່ນມີຄວາມຮັບຜິດຊອບ ແລະ ບໍ່ມີລະເມີດສິດທິມະນຸດ ລວມເຖິງ ຕ້ອງຮັບປະກັນວ່າ ທີ່ດິນທີ່ຈະມີການດຳເນີນ ການສ້າງຕັ້ງ ເຂດເສດຖະກິດພິເສດນັ້ນ ໄດ້ຮັບການຈັດສັນຢ່າງຖືກຕ້ອງຕາມກົດໝາຍ ແລະ ເຄົາລົບ ສິດທິມະນຸດ ຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ໃນທຸກໆຂະບວນການ ຂອງການຈັດຊື້ທີ່ດິນ ແລະ ການຫັນປ່ຽນທີ່ດິນ ລວມເຖິງ ຂະບວນການໃນການຍົກຍ້າຍອອກຈາກທີ່ດິນ
4. ຮັບປະກັນວ່າ ບົດປະເມີນຜົນກະທົບສິ່ງແວດລ້ອມ ໄດ້ຮັບການດຳເນີນຢ່າງເປັນເອກະລາດ, ມີຄວາມຍຸຕິທຳ, ຖືກຕ້ອງຕາມກົດໝາຍ ແລະ ມີປະສິດທິພາບ
5. ຮັບປະກັນວ່າ ແຮງງານ ຫຼື ລູກຈ້າງ ໄດ້ຮັບຄ່າແຮງງານຢ່າງເໝາະສົມ ທັງໄດ້ຮັບການປົກປ້ອງ ຈາກການຖືກເລືອກປະຕິບັດ ແລະ ຄຸກຄາມ ຢູ່ໃນສະຖານທີ່ເຮັດວຽກ; ພ້ອມທັງ ມີສິດໃນການເຮັດວຽກໃນສະຖານທີ່ ທີ່ປອດໄພ ແລະ ມີສະພາບແວດລ້ອມທີ່ດີ
6. ຮັບປະກັນວ່າ ແຮງງານທຸກຄົນ ມີສິດ ຢ່າງອິດສະຫຼະ ໃນການສ້າງຕັ້ງ ແລະ ເຂົ້າຮ່ວມ ສະຫະພາບແຮງງານຕາມທີ່ພວກເຂົາເລືອກ ແລະ ບໍ່ຄວນຖືກໄລ່ອອກ ເນື່ອງດ້ວຍເຫດຜົນທີ່ ບໍລິສັດບໍ່ເຫັນດີກັບ ສະຫະພາບແຮງງານ
7. ສ້າງຕັ້ງກົນໄກການຮ້ອງທຸກ ໃນໄລຍະເວລາຂອງການດຳເນີນງານ (Operational Level Grievance Mechanisms ຫຼື OGM) ທີ່ຜູ້ໄດ້ຮັບຜົນກະທົບສາມາດເຂົ້າເຖິງໄດ້ ແລະ ມີປະສິດທິພາບ ເຊິ່ງເປັນຂະບວນການທີ່ອອກແບບຮ່ວມກັບ ຊຸມຊົນທີ່ໄດ້ຮັບຜົນກະທົບ, ເປັນຂະບວນການທີ່ ເປັນເອກະລາດ, ມີຄວາມເປັນກາງ ແລະ ມີປະສິດທິຜົນ ເຊິ່ງໃນນັ້ນລວມເຖິງ ການສ້າງພັນທະຜູກມັດກັບບໍລິສັດ ເພື່ອແກ້ໄຂ ບັນດາຂໍ້ກັງວົນຕ່າງໆຂອງ ຜູ້ທີ່ໄດ້ຮັບຜົນກະທົບ, ຊຸມຊົນທ້ອງຖິ່ນ ແລະ ແຮງງານທີ່ເຮັດວຽກໃນເຂດເສດຖະກິດພິເສດ ທີ່ເກີດຂຶ້ນ ໃນຊ່ວງຂອງການດຳເນີນງານ
8. ຍຸດຕິ ການນຳໃຊ້ກົດໝາຍເພື່ອຄຸກຄາມ ເຊັ່ນ ການໃສ່ ຂໍ້ຫາມິ່ນປະໝາດ ແລະ ຂໍ້ຫາການບຸກລຸກ ແກ່ບຸກຄົນ ແລະ ຊຸມຊົນ ທີ່ໄດ້ຮັບຜົນກະທົບ ຈາກ ນະໂຍບາຍ ການສ້າງຕັ້ງ ເຂດເສດຖະກິດພິເສດ ແລະ ຜູ້ທີ່ພະຍາຍາມນຳສະເໜີປະເດັນ ກ່ຽວກັບການຖືກລະເມີດສິດທິ ຕໍ່ສາທາລະນະ ໃຫ້ຮັບຮູ້

**ຂໍ້ສະເໜີແນະ ຕໍ່ພາກປະຊາສັງຄົມ:**

1. ຕິດຕາມ ແລະ ເກັບກຳຂໍ້ມູນ ກ່ຽວກັບ ການພັດທະນາເຂດເສດຖະກິດພິເສດ ພ້ອມທັງ ເຂົ້າຮ່ວມ ໃນການຮຽກຮ້ອງ ເພື່ອຮັບປະກັນວ່າ ການພັດທະນາເຫຼົ່ານັ້ນ ສອດຄ້ອງກັບ ຫຼັກການເຄົາລົບ ສິດທິມະນຸດ ຂອງຊຸມຊົນ ແລະ ຜູ້ທີ່ໄດ້ຮັບຜົນກະທົບ; ພ້ອມທັງຮ່ວມກັນຮຽກຮ້ອງໃຫ້ ຂັ້ນຕອນຂອງການວາງແຜນ, ການສ້າງຕັ້ງ ແລະ ດຳເນີນງານ ເຂດເສດຖະກິດພິເສດ ດຳເນີນຕາມ ຫຼັກການ ແລະ ມາດຕະຖານ ກົດໝາຍສາກົນ ແລະ ກົດໝາຍພາຍໃນປະເທດ ເຊິ່ງລວມເຖິງ ກົດໝາຍ ແລະ ມາດຕະຖານ ສິດທິມະນຸດ
2. ສະໜັບສະໜູນ ຊຸມຊົນທ້ອງຖິ່ນ, ແຮງງານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງອື່ນໆ ເພື່ອຮັບປະກັນວ່າ ເຂົາເຈົ້າໄດ້ຮັບການເຄົາລົບສິດທິມະນຸດ ລວມເຖິງ ການມີສິດໃນການຄັດຄ້ານ ບັນດາໂຄງການ ເຂດເສດຖະກິດພິເສດ ທີ່ມີການສະເໜີສ້າງຕັ້ງ
3. ປະກອບສ່ວນ ແລະ ມີສ່ວນຮ່ວມ ໃນ ກົນໄກ, ໜ່ວຍງານ ແລະ ສະຖາບັນ ຂອງ ສະຫະປະຊາຊາດ ເພື່ອເປັນການເສີມສ້າງຂະບວນການຮຽກຮ້ອງ ກ່ຽວກັບການພັດທະນາເຂດເສດຖະກິດພິເສດ ໃຫ້ກວ້າງຂວາງຫຼາຍຂຶ້ນ.

ພວກເຮົາຂໍສະແດງຄວາມຂອບໃຈ ຕໍ່ບັນດາອົງກອນຕ່າງໆ ທີ່ໄດ້ເຮັດວຽກຢ່າງຕັ້ງໜ້າ ໃນການຕິດຕາມ, ລາຍງານ, ຄົ້ນຄວ້າ ແລະ ວິເຄາະ ກ່ຽວກັບ ການພັດທະນາເຂດເສດຖະກິດພິເສດ; ເຊິ່ງໄດ້ມີສ່ວນຮ່ວມຕໍ່ກັບການພັດທະນາ ກອບແນວຮ່ວມ ເພື່ອຂໍການສະໜັບສະໜູນ ສະບັບນີ້ຂຶ້ນມາ ເຊັ່ນ:

1. ອົງການ ແອມເນສຕີ້ ສາກົນ (Amnesty International)
2. ສູນເພື່ອສິດທິມະນຸດ ແຫ່ງ ກໍາປູເຈຍ (Cambodian Center for Human Rights ຫຼື CCHR)
3. ສູນພັນທະມິດ ເພື່ອ ແຮງງານ ແລະ ສິດທິມະນຸດ (Center for Alliance of Labor and Human Rights ຫຼື CENTRAL)
4. Dawei Watch
5. ສູນ ເພື່ອການຮ່ວມມື ຕາເວັນອອກ-ຕາເວັນຕົກ (East-West Center)
6. ກຸ່ມວິຊາການ ເພື່ອການຕິດຕາມ ການລົງທຶນຂ້າມພົມແດນ (ETO Watch)
7. ມູນນິທິ ເພື່ອສິດທິມະນຸດ ແລະ ການພັດທະນາ (Human Rights and Development Foundation ຫຼື HRDF)
8. Mekong Butterfly
9. Mekong Watch
10. Solidarity Center
11. ສະຖາບັນ ເພື່ອສັນຕິພາບ ແຫ່ງ ສ.ອາເມຣິກາ (United States Institute of Peace ຫຼື USIP)

ພ້ອມດ້ວຍ ບັນດາ ນັກຄົ້ນຄວ້າ, ນັກກົດໝາຍ ແລະ ຄູ່ຮ່ວມງານ ຈາກອົງກອນ ແລະ ສ່ວນບຸກຄົນ ທີ່ໄດ້ ສະໜັບສະໜູນໃນການປະກອບສ່ວນ ໃນການວິເຄາະ ແລະ ປະກອບຄໍາຄິດເຫັນ ຕໍ່ເອກະສານສະບັບນີ້.

EarthRights International icj International Commission of Jurists LAND WATCH THAI